# ປະກາດແຈ້ງການກ່ຽວກັບສິດປະໂຫຍດທີ່ມີພາຍໃຕ້ M.G.L. Chapter 175M

# ການລາພັກວຽກດ້ວຍເຫດຜົນທາງຄອບຄົວ ແລະ ທາງການແພດ (PFML)

## ວັນລາພັກທີ່ມີໃຫ້

ບຸກຄົນທີ່ໄດ້ຮັບຄວາມຄຸ້ມຄອງອາດຈະມີສິດລາພັກວຽກດ້ວຍເຫດຜົນທາງຄອບຄົວ ແລະ ທາງການແພດດ້ວຍເຫດຜົນດັ່ງຕໍ່ໄປນີ້:

- ລາພັກວຽກດ້ວຍເຫດຜົນທາງການແພດໂດຍໄດ້ຮັບຄ່າຈ້າງໄດ້ສູງສຸດເຖິງ 20 ອາທິດໃນໜຶ່ງປີຜົນປະໂຫຍດຖ້າເຂົາເຈົ້າມີພາວະສຸຂະພາບຮ້າຍແຮງຈົນເຮັດໃຫ້ເຂົາເຈົ້າບໍ່ສາມາດເຮັດວຽກໄດ້.
- ລາພັກວຽກດ້ວຍເຫດຜົນທາງຄອບຄົວໂດຍໄດ້ຮັບຄ່າຈ້າງໄດ້ສູງສຸດເຖິງ 12 ອາທິດໃນໜຶ່ງປີຜົນປະໂຫຍດທີ່ກ່ຽວຂ້ອງກັບການຄອດບຸດ, ການຮັບບຸດບຸນທຳ ຫຼື ການຈັດຫາທີ່ຢູ່ອາໄສໃຫ້ລູກອຸປະຖຳ, ການດູແລສະມາຊິກໃນຄອບຄົວທີ່ມີພາວະສຸຂະພາບຮ້າຍແຮງ ຫຼື ເນື່ອງຈາກຄວາມຈຳເປັນເລັ່ງດ່ວນຕາມເກນກຳນົດເນື່ອງຈາກຂໍ້ເທັດຈິງທີ່ສະມາຊິກໃນຄອບຄົວຄົນໃດໜຶ່ງຕ້ອງເຂົ້າປະຈຳການທາງທະຫານ ຫຼື ໄດ້ຮັບແຈ້ງວ່າມີການເອີ້ນຕົວໃຫ້ໄປປະຈຳການທາງທະຫານໃນກອງທັບທີ່ກຳລັງຈະເກີດຂຶ້ນ.
- ລາພັກວຽກດ້ວຍເຫດຜົນທາງຄອບຄົວໂດຍໄດ້ຮັບຄ່າຈ້າງໄດ້ສູງສຸດເຖິງ 26 ອາທິດໃນໜຶ່ງປີຜົນປະໂຫຍດເພື່ອດູແລສະມາຊິກໃນຄອບຄົວທີ່ເປັນທະຫານ ທີ່ໄດ້ຮັບຄວາມຄຸ້ມຄອງທີ່ມີພາວະສຸຂະພາບຮ້າຍແຮງ.

**ບຸກຄົນທີ່ໄດ້ຮັບຄວາມຄຸ້ມຄອງມີສິດທີ່ຈະລາພັກວຽກດ້ວຍເຫດຜົນທາງຄອບຄົວ ແລະ ດ້ວຍເຫດຜົນທາງການແພດໂດຍໄດ້ຮັບຄ່າຈ້າງລວມກັນໄດ້ບໍ່ເກີນ 26 ອາທິດໃນໜຶ່ງປີຜົນປະໂຫຍດ.**

## ສິດປະໂຫຍດ

ເພື່ອເປັນທຶນໃຫ້ໂປຣແກຣມ PFML ນາຍຈ້າງສາມາດຫັກເງິນສົມທົບອອກຈາກບັນຊີເງິນເດືອນໄດ້ສູງສຸດເຖິງ 0.46% (ປັບທຸກປີ) ຈາກຄ່າຈ້າງ ຫຼື ລາຍໄດ້ອື່ນຂອງບຸກຄົນທີ່ໄດ້ຮັບຄວາມຄຸ້ມຄອງ.

ລາຍໄດ້ສະເລ່ຍໃນແຕ່ລະອາທິດຂອງບຸກຄົນທີ່ໄດ້ຮັບຄວາມຄຸ້ມຄອງຈະເປັນຕົວກຳນົດຈຳນວນສິດປະໂຫຍດຂອງເຂົາເຈົ້າສຳລັບສິດປະໂຫຍດໃນແຕ່ລະອາທິດສູງສຸດບໍ່ເກີນ 1,149.90 ໂດລາ (ປັບທຸກປີ).

## ບຸກຄົນໃດທີ່ເປັນບຸກຄົນທີ່ໄດ້ຮັບຄວາມຄຸ້ມຄອງພາຍໃຕ້ກົດໝາຍ?

ໂດຍທົ່ວໄປແລ້ວ ລູກຈ້າງມີຄຸນສົມບັດເປັນບຸກຄົນທີ່ໄດ້ຮັບຄວາມຄຸ້ມຄອງທີ່ມີສິດໄດ້ຮັບສິດປະໂຫຍດ PFML ຖ້າເຂົາເຈົ້າ:

- ໄດ້ຮັບຄວາມຄຸ້ມຄອງໂດຍປະກັນການຫວ່າງງານໃນລັດ Massachusetts ແລະໄດ້ຮັບເງິນຄ່າຈ້າງຈາກນາຍຈ້າງໃນລັດ Massachusetts ຫຼື
- ເປັນບຸກຄົນທີ່ປະກອບອາຊີບອິດສະຫຼະທີ່ອາໄສແລະເຮັດວຽກຢູ່ໃນລັດ Massachusetts ແລະເລືອກທີ່ຈະເຂົ້າຮ່ວມໃນໂປຣແກຣມ ແລະ
- ມີລາຍໄດ້ຢ່າງໜ້ອຍ 30 ເທົ່າຂອງຈຳນວນເງິນຊ່ວຍເຫຼືອທີ່ຄາດໄວ້ ແລະຢ່າງໜ້ອຍ 6,300 ໂດລາ (ປັບທຸກປີ) ໃນຊ່ວງສີ່ໄຕມາດທີ່ຄົບຖ້ວນຫຼ້າສຸດກ່ອນການຍື່ນຂໍຮັບເງິນຊ່ວຍເຫຼືອ.

### ການຄຸ້ມຄອງວຽກງານ

ໂດຍທົ່ວໄປແລ້ວ ລູກຈ້າງທີ່ໄດ້ລາພັກວຽກດ້ວຍເຫດຜົນທາງຄອບຄົວ ແລະດ້ວຍເຫດຜົນທາງການແພດຈະຕ້ອງໄດ້ກັບຄືນໄປເຮັດວຽກໃນຕຳແໜ່ງເກົ່າ ຫຼືເທົ່າທຽມຕຳແໜ່ງເກົ່າ ພ້ອມທັງຕ້ອງໄດ້ສະຖານະ, ຄ່າຈ້າງ, ສິດປະໂຫຍດຈາກການຈ້າງງານ, ການນັບໄລຍະເວລາທີ່ໄດ້ເຮັດວຽກມາ, ແລະລະດັບໄວຍະວຸດຄືກັນກັບວັນທີລາພັກວຽກ.

*ການຄຸ້ມຄອງວຽກງານເຫຼົ່ານີ້ໃຊ້ບໍ່ໄດ້ກັບອະດີດລູກຈ້າງ, ຜູ້ຮັບເໝົາອິດສະຫຼະ ຫຼື ບຸກຄົນທີ່ປະກອບອາຊີບອິດສະຫຼະ.*

### ປະກັນສຸຂະພາບ

ນາຍຈ້າງຈະຕ້ອງຈັດໃຫ້ມີ, ສົ່ງເງິນສົມທົບ ຫຼື ຮັກສາສິດປະໂຫຍດຂອງລູກຈ້າງຈາກການຈ້າງງານທີ່ກ່ຽວຂ້ອງກັບສະວັດດີການດ້ານການປະກັນສຸຂະພາບ ຖ້າມີ ໃນລະດັບແລະພາຍໃຕ້ການຄຸ້ມຄອງພາວະສຸຂະພາບທີ່ອາດຈະຕ້ອງຈັດຫາໃຫ້ໃນກໍລະນີທີ່ລູກຈ້າງໄດ້ສືບຕໍ່ເຮັດວຽກຢ່າງຕໍ່ເນື່ອງຕະຫຼອດໄລຍະເວລາໃນການລາພັກວຽກດັ່ງກ່າວ

## ແຜນເອກະຊົນ

ຖ້ານາຍຈ້າງສະເໜີໃຫ້ລູກຈ້າງລາພັກວຽກດ້ວຍເຫດຜົນທາງຄອບຄົວ, ເຫດຜົນທາງການແພດ ຫຼື ທັງສອງຢ່າງໂດຍໄດ້ຮັບຄ່າຈ້າງໂດຍມີສິດປະໂຫຍດທີ່ຢ່າງໜ້ອຍດີເທົ່າກັບທີ່ມີການສະເໜີໃຫ້ພາຍໃຕ້ກົດໝາຍ ນາຍຈ້າງອາດຈະສາມາດສະໝັກຂໍຮັບການຍົກເວັ້ນຈາກການຈ່າຍເງິນສົມທົບ. ລູກຈ້າງຈະສືບຕໍ່ໄດ້ຮັບຄວາມຄຸ້ມຄອງພາຍໃຕ້ກົດໝາຍຈາກການເລືອກປະຕິບັດແລະການແກ້ແຄ້ນ ເຖິງແມ່ນວ່ານາຍຈ້າງຈະເລືອກທີ່ຈະໃຫ້ສະວັດດີການໃນການລາພັກວຽກໂດຍໄດ້ຮັບຄ່າຈ້າງຜ່ານ ແຜນປະກັນເອກະຊົນ.

ຊື່ບໍລິສັດປະກັນເອກະຊົນ_________________________________________ ແຜນປະກັນເອກະຊົນແມ່ນສຳລັບ: ☐ ການແພດ ☐ ຄອບຄົວ ☐ ທັງສອງຢ່າງ

ທີ່ຢູ່:____________________________________________________________ ໂທລະສັບ:________________________________

ເມືອງ, ລັດ ແລະ ລະຫັດໄປສະນີ:____________________________________________ ເວັບໄຊ: ________________________________

## ການບໍ່ເລືອກປະຕິບັດ ຫຼື ການບໍ່ແກ້ແຄ້ນ

- ມັນເປັນສິ່ງຜິດກົດໝາຍທີ່ນາຍຈ້າງຈະເລືອກປະຕິບັດ ຫຼືແກ້ແຄ້ນຕໍ່ລູກຈ້າງຍ້ອນການໃຊ້ສິດໃດໆທີ່ເຂົາເຈົ້າມີພາຍໃຕ້ກົດໝາຍ.
- ລູກຈ້າງ ຫຼື ອະດີດລູກຈ້າງທີ່ຖືກເລືອກປະຕິບັດ ຫຼືຖືກແກ້ແຄ້ນຈາກການໃຊ້ສິດພາຍໃຕ້ກົດໝາຍອາດຈະສາມາດຮ້ອງຟ້ອງຄະດີແພ່ງໃນສານສູງໄດ້ບໍ່ເກີນສາມປີຫຼັງເກີດການລະເມີດຂຶ້ນ ແລະອາດຈະມີສິດໄດ້ຮັບຄ່າເສຍຫາຍໄດ້ເຖິງສາມເທົ່າຂອງຄ່າຈ້າງທີ່ສູນເສຍໄປ.

**ຖ້າທ່ານມີຄຳຖາມ ຫຼື ຂໍ້ກັງວົນກ່ຽວກັບສິດໃນ PFML ຂອງທ່ານ ໃຫ້ໂທໄປທີ່:**

(833) 344-7365 ຫຼື ໄປທີ່: https://www.mass.gov/DFML

ຕ້ອງຕິດປະກາດແຈ້ງການນີ້ໄວ້ທີ່ບໍລິເວນທີ່ມອງເຫັນໄດ້ຊັດເຈນໃນສະຖານປະກອບການຂອງນາຍຈ້າງ.

Paid Family & Medical Leave MASSACHUSETTS

ໂປສເຕີປີ 2024
ປັບປຸງແກ້ໄຂ 10/2023